# ນຳເອົາຊຸມຊົນຂອງເຈົ້າເຂົ້າຮ່ວມເພື່ອມີສ່ວນກັບງົບປະມານ ຫຼາຍກວ່າ 400 ຕື້ໂດລາ ໃນແຕ່ລະປີ

ຈົ່ງຕອບ 10 ຄຳຖາມພາຍໃນ 10 ນາທີ ເພື່ອຊ່ວຍເຫຼືອຊຸມຊົນຂອງທ່ານ

## ການສຳຫຼວດປະຊາກອນ: ຄຳອະທິບາຍໂດຍຫຍໍ້

- **ແມ່ນຫຍັງ:** ການສຳຫຼວດປະຊາກອນແມ່ນການນັບຈຳນວນທຸກໆຄົນທີ່ອາໃສຢູ່ໃນສະຫະຣັດ.
- **ແມ່ນໃຜ:** ຜູ້ອາໃສຢູ່ໃນສະຫະຣັດທຸກຄົນຕ້ອງໄດ້ຖືກນັບ, ໂດຍລວມເອົາຄົນທຸກເຊື້ອຊາດ ແລະ ທຸກຊົນເຜົ່າ, ທັງຜູ້ເປັນສັນຊາດສະຫະຣັດ ແລະ ຜູ້ບໍ່ເປັນສັນຊາດສະຫະຣັດ.
- **ເມື່ອໃດ:** ທ່ານຈະໄດ້ຮັບແບບສອບຖາມໃນເດືອນ ມີນາ 2010 ໂດຍການສົ່ງໃຫ້ທາງໄປສະນີຂອງສະຫະຣັດ ຫຼື ອາດຈະໄປສົ່ງໃຫ້ດ້ວຍມື. ບາງບຸກຄົນທີ່ອາໃສຢູ່ໃນພື້ນທີ່ຫ່າງໄກສອກຫຼີກແມ່ນຈະຖືກນັບເປັນລາຍບຸກຄົນ.
- **ຍ້ອນຫຍັງ:** ລັດຖະທຳມະນູນສະຫະຣັດໄດ້ກຳນົດໃຫ້ມີການສຳຫຼວດປະຊາກອນທົ່ວປະເທດໜຶ່ງຄັ້ງໃນທຸກໆ 10 ປີ ເພື່ອນັບຈຳນວນປະຊາກອນ ແລະ ກຳນົດຈຳນວນຜູ້ແທນໃນແຕ່ລະລັດທີ່ຈະເປັນຜູ້ແທນຢູ່ໃນສະພາຕ່ຳຂອງສະຫະຣັດ.
- **ແນວໃດ:** ເມື່ອໄດ້ຮັບແບບສອບຖາມແລ້ວ ທຸກຄົວເຮືອນຈະຕ້ອງປະກອບໃຫ້ຄົບຖ້ວນ ແລະ ສົ່ງກັບຄືນ. ຄົວເຮືອນທີ່ບໍ່ມີການໃຫ້ຄຳຕອບກັບມານັ້ນແມ່ນອາດຈະໄດ້ຮັບແບບສອບຖາມປ່ຽນແທນໃນຕົ້ນເດືອນເມສາ. ຜູ້ສຳຫຼວດປະຊາກອນຈະໄປຫາເຮືອນຂອງທ່ານຜູ້ທີ່ບໍ່ໄດ້ສົ່ງແບບສອບຖາມກັບຄືນ ເພື່ອເຮັດການນັບຈຳນວນພົນຢູ່ໃນນັ້ນ.

## ການນັບຈຳນວນທີ່ຄົບຖ້ວນສົມບູນ: ຄວາມສຳຄັນຂອງຂໍ້ມູນຈາກສຳຫຼວດປະຊາກອນ

- ໃນທຸກໆປີ, ລັດຖະບານກາງຈັດສັນງົບປະມານຫຼາຍກວ່າ 400 ຕື້ໂດລາ ໃຫ້ແກ່ບັນດາລັດ ແລະ ຊຸມຊົນຕ່າງໆ ໂດຍສ່ວນໜຶ່ງກໍອີງໃສ່ຂໍ້ມູນສຳຫຼວດປະຊາກອນ.
- ຂໍ້ມູນສຳຫຼວດປະຊາກອນເປັນສິ່ງໃຫ້ທິດທາງແກ່ເຈົ້າໜ້າທີ່ໃນເຂດທ້ອງຖິ່ນໃນການຕັດສິນວ່າບ່ອນໃດຄວນສ້າງໂຮງຮຽນໃໝ່, ເສັ້ນທາງໃໝ່, ໂຮງໝໍ, ສູນລ້ຽງເດັກ ແລະ ດູແລຜູ້ສູງອາຍຸ, ສິ່ງອຳນວຍຄວາມສະດວກໃຫ້ແກ່ຊຸມຊົນຕື່ມອີກ ແລະ ອື່ນໆອີກ.
- ຂໍ້ມູນສຳຫຼວດປະຊາກອນຈະໃຊ້ເພື່ອກຳນົດເຂດແດນໃຫ້ກັບລັດ ແລະ ກົດໝາຍທ້ອງຖິ່ນ ແລະ ບັນດາເມືອງທີ່ກ່ຽວກັບສະພາຕ່ຳຂອງສະຫະຣັດ.

## ແບບສອບຖາມການສຳຫຼວດປະຊາກອນປີ 2010: ງ່າຍດາຍ, ສຳຄັນ ແລະ ປອດໄພ

- ເພາະມີພຽງແຕ່ 10 ຄຳຖາມເທົ່ານັ້ນ, ແບບສອບຖາມການສຳຫຼວດປະຊາກອນ 2010 ໃຊ້ເວລາຕອບໃຫ້ແລ້ວພຽງແຕ່ 10 ນາທີເທົ່ານັ້ນ. ທຸກຄົວເຮືອນໄດ້ຖືກຮຽກຮ້ອງໃຫ້ບອກຂໍ້ມູນປະຊາກອນທີ່ສຳຄັນຕົ້ນຕໍ, ລວມມີຄື: ເຮືອນທີ່ອາໃສຢູ່ນັ້ນແມ່ນໄດ້ເຊົ່າຢູ່ ຫຼື ເປັນເຮືອນຂອງຕົນເອງ; ທີ່ຢູ່ຂອງບ່ອນພັກພາອາໃສ; ແລະ ຊື່, ເພດ, ອາຍຸ, ແລະ ເຊື້ອຊາດຂອງຜູ້ອື່ນໆທີ່ອາໃສຢູ່ໃນເຮືອນ.
- ຕາມກົດໝາຍ ສຳນັກງານສຳຫຼວດປະຊາກອນບໍ່ສາມາດເປີດເຜີຍຄຳຕອບໃນແບບສອບຖາມການສຳຫຼວດປະຊາກອນຂອງບຸກຄົນໃຫ້ບຸກຄົນໃດໆຮູ້ທັງນັ້ນ, ລວມທັງອົງການອື່ນໆຂອງລັດຖະບານກາງ ແລະ ໜ່ວຍງານປະຕິບັດກົດໝາຍ.

United States Census 2010

ສຳມະໂນຄົວຂອງ
ສະຫະລັດອາເມຣິກາ

ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ

## ປະຫວັດການສຳຫຼວດປະຊາກອນ

ການສຳຫຼວດປະຊາກອນຄັ້ງທຳອິດແມ່ນໄດ້ເຮັດໃນປີ 1790 ເພື່ອກຳນົດຈຳນວນຂອງທີ່ນັ່ງຂອງຜູ້ແທນທີ່ແຕ່ລະລັດຈະໄດ້ຮັບຢູ່ໃນສະພາຕ່ຳຂອງສະຫະລັດ. ການສຳຫຼວດປະຊາກອນຍັງໄດ້ເຮັດໃຫ້ມີຄວາມເຂົ້າໃຈດີຂຶ້ນກ່ຽວກັບບ່ອນຢູ່ອາໃສຂອງພົນລະເມືອງ ແລະ ເພື່ອກຳນົດວາງແຜນຜັງເມືອງ ເມື່ອປະເທດຊາດມີການເຕີບໃຫຍ່ຂະຫຍາຍຕົວ.

## ກ່ຽວກັບສຳນັກງານສຳຫຼວດປະຊາກອນ

ສຳນັກງານສຳຫຼວດປະຊາກອນໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1902. ໃນການເພີ່ມເຕີມໃຫ້ກັບການປົກຄອງສຳມະໂນປະຊາກອນ ແລະ ທີ່ຢູ່ອາໃສ, ຮອດມື້ນີ້ສຳນັກງານສຳຫຼວດປະຊາກອນໄດ້ເຮັດການສຳຫຼວດປະຈຳປີມາຫຼາຍກວ່າ 200 ຄັ້ງແລ້ວ, ລວມມີທັງການສຳຫຼວດຊຸມຊົນຊາວອາເມຣິກາ, ການສຳຫຼວດປະຊາກອນໃນປະຈຸບັນ ແລະ ການສຳຫຼວດທາງເສດຖະກິດໃນທຸກໆຫ້າປີ.



ກະລຸນາສົ່ງແບບຟອມການສຳຫຼວດປະຊາກອນກັບຄືນໃຫ້ທາງການມື້ນີ້

# ການສຳຫຼວດປະຊາກອນປີ 2010: ວັນທີທີ່ສຳຄັນ

*ກຸມພາ – ມີນາ 2010*

ແບບສອບຖາມການສຳຫຼວດຈະຖືກສົ່ງທາງໄປສະນີ ຫຼື ສົ່ງດ້ວຍມືໃຫ້ກັບທຸກຄົວເຮືອນ.

*ມີນາ – ເມສາ 2010*

ໂຄງການ Be Counted ໄດ້ຮັບການຈັດຕັ້ງປະຕິບັດ. ແບບສອບຖາມການສຳຫຼວດມີຢູ່ທີ່ຕາມສະຖານທີ່ຂອງລັດທີ່ໄດ້ເລືອກໄວ້ ສຳລັບບຸກຄົນຜູ້ທີ່ບໍ່ໄດ້ຮັບໂດຍທາງໄປສະນີ.

*1 ເມສາ 2010*

ມື້ສຳຫຼວດປະຊາກອນ

*ພຶດສະພາ – ກໍລະກົດ 2010*

ຜູ້ເຮັດການສຳຫຼວດລົງໄປຫາຄົວເຮືອນທີ່ບໍ່ໄດ້ສົ່ງແບບສອບຖາມຄືນໂດຍທາງໄປສະນີ.

*31 ທັນວາ 2010*

ກົດໝາຍກຳນົດໃຫ້ສຳນັກງານສຳຫຼວດປະຊາກອນນຳສົ່ງຜົນການສຳຫຼວດໃຫ້ກັບປະທານາທິບໍດີ.

*ມີນາ 2011*

ກົດໝາຍກຳນົດໃຫ້ສຳນັກງານສຳຫຼວດປະຊາກອນເຮັດສຳເລັດການນຳສົ່ງຂໍ້ມູນທີ່ປັບໜ້າຂອງໃໝ່ໄປໃຫ້ກັບທຸກລັດ.

# ຄຳຖາມທີ່ມັກຖາມຢູ່ເລື້ອຍໆ

1. **ຖາມ. ໃຜຄວນເປັນຜູ້ຕອບແບບຟອມແບບສອບຖາມ?**

   **ຕອບ.** ບຸກຄົນຜູ້ທີ່ມີຊື່ອອກຢູ່ໃນເຮືອນທີ່ຕົນເອງເປັນເຈົ້າຂອງ ຫຼື ເຮືອນເຊົ່າຄວນຈະເປັນຜູ້ປະກອບແບບສອບຖາມໃຫ້ຄົບຖ້ວນໃນນາມຂອງທຸກໆຄົນທີ່ຢູ່ໃນເຮືອນນັ້ນ, ລວມເອົາທັງຜູ້ເປັນຍາດຕິພີ່ນ້ອງ ແລະ ຜູ້ບໍ່ແມ່ນຍາດຕິພີ່ນ້ອງ.

2. **ຖາມ. ການສຳຫຼວດປະຊາກອນ 2010 ຈະແຕກຕ່າງຈາກການສຳຫຼວດປະຊາກອນຜ່ານມາແນວໃດ?**

   **ຕອບ.** ໃນປີ 2010, ທຸກໆບ້ານເຮືອນແມ່ນຈະໄດ້ຮັບແບບສອບຖາມສັ້ນທີ່ມີພຽງແຕ່ 10 ຄຳຖາມ. ຂໍ້ມູນເສດຖະກິດ-ສັງຄົມອັນລະອຽດເພີ່ມເຕີມທີ່ໄດ້ເກັບໃນເມື່ອກ່ອນຜ່ານການສຳຫຼວດປະຊາກອນໃນສິບປີຜ່ານມາແມ່ນຈະໄດ້ຖາມໃນເປີເຊັນໜ້ອຍຂອງປະຊາກອນຜ່ານທາງການສຳຫຼວດຊຸມຊົນອາເມຣິກາປະຈຳປີ. ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບການສຳຫຼວດຊຸມຊົນອາເມຣິກາ, ຈົ່ງເຂົ້າໄປທີ່ www.census.gov.

3. **ຖາມ. ຂໍ້ມູນການສຳຫຼວດປະຊາກອນຈະຖືກນຳໄປໃຊ້ແນວໃດ?**

   **ຕອບ.** ຂໍ້ມູນການສຳຫຼວດປະຊາກອນກຳນົດຈຳນວນທີ່ນັ່ງຂອງຜູ້ແທນໃນແຕ່ລະລັດທີ່ຈະມີຢູ່ໃນສະພາຕ່ຳຂອງສະຫະຣັດ. ຂໍ້ມູນການສຳຫຼວດປະຊາກອນຍັງສາມາດຊ່ວຍກຳນົດການຈັດສັນທຶນຂອງລັດຖະບານກາງໃຫ້ກັບການໃຊ້ຈ່າຍບໍລິການຊຸມຊົນເຊັ່ນ: ໂຄງການອາຫານທ່ຽງໃນໂຮງຮຽນ ແລະ ສູນດູແລຜູ້ສູງອາຍຸ ແລະ ການກໍ່ສ້າງໃໝ່ເຊັ່ນ: ຖະໜົນຫົນທາງ ແລະ ໂຮງໝໍ.

4. **ຖາມ. ມີການຊ່ວຍເຫຼືອປະເພດໃດແດ່ທີ່ຈະຊ່ວຍໃຫ້ຜູ້ຄົນປະກອບແບບສອບຖາມໄດ້ຄົບຖ້ວນສົມບູນ?**

   **ຕອບ.** ມີຄຳແນະນຳໃຫ້ການຊ່ວຍເຫຼືອທາງດ້ານພາສາໃນການສຳຫຼວດປະຊາກອນ 2010 ເປັນຫຼາຍໆພາສາ. ສູນຊ່ວຍເຫຼືອແບບສອບຖາມ (QAC) ຍັງຈະຊ່ວຍຜູ້ທີ່ບໍ່ສາມາດອ່ານ ຫຼື ເຂົ້າໃຈຄຳຖາມນຳອີກ. ແບບສອບຖາມທີ່ພິມເປັນຕົວໃຫຍ່ແມ່ນມີໃຫ້ກັບຜູ້ທີ່ມີຄວາມບົກພ່ອງທາງສາຍຕາຕາມການສະເໜີຂໍ ແລະ ໂຄງການອຸປະກອນທາງດ້ານຕົວໜັງສືທາງການຟັງໃຫ້ກັບຜູ້ຫູໜວກ (TDD) ຈະຊ່ວຍໃນການໄດ້ຍິນຂອງຜູ້ມີຄວາມບົກພ່ອງທາງຫູ. ຕິດຕໍ່ກັບສູນສຳຫຼວດປະຊາກອນໃນທ້ອງຖິ່ນສຳລັບລາຍລະອຽດເພີ່ມເຕີມກ່ຽວກັບປະເພດຂອງການຊ່ວຍເຫຼືອທີ່ມີຢູ່ ແລະ ສຳລັບທີ່ຢູ່ຂອງສູນຊ່ວຍເຫຼືອແບບສອບຖາມ QAC.

5. **ຖາມ. ສຳນັກງານສຳຫຼວດປະຊາກອນນັບຄົນຜູ້ທີ່ບໍ່ມີທີ່ຢູ່ຖາວອນໄດ້ແນວໃດ?**

   **ຕອບ.** ພະນັກງານສຳນັກງານສຳຫຼວດປະຊາກອນຈະເຮັດການດຳເນີນການທີ່ຮັດກຸມເພື່ອນັບຄົນຜູ້ທີ່ອາໄສຢູ່ໃນບ່ອນທີ່ເປັນກຸ່ມເຊັ່ນ: ຫໍພັກຂອງມະຫາວິທະຍາໄລ, ຄ້າຍທະຫານ, ບ່ອນໃຫ້ການດູແລ ແລະ ທີ່ລີ້ໄພ, ເຊັ່ນດຽວກັບຜູ້ທີ່ຕ້ອງຖືກຍ້າຍອອກໄປໂດຍໄພພິບັດທຳມະຊາດ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ການສຳຫຼວດປະຊາກອນ 2010, ໃຫ້ເຂົ້າໄປເບິ່ງທີ່ 2010census.gov.

United States Census 2010
ສຳມະໂນຄົວຂອງສະຫະລັດອາເມຣິກາ
ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ

Issued August 2009 | Form D-3286 (L)